# ຄຳນຳຂອງຜູ້ຮຽບຮຽງ

ໜັງສືປະວັດສາດລາວນີ້ ກະຊວງສຶກສາທິການແຫ່ງພຣະຣາຊອານາຈັກລາວ ໄດ້ພິມມາແລ້ວເທື່ອນຶ່ງ ໃນປີ ຄ.ສ. 1957. ໃນການພິມຄັ້ງນັ້ນ ຍັງມີການຜິດພາດ ຂາດເຂີນຢູ່ຫລາຍ ເພາະເປັນການພິມເທື່ອທຳອິດ. ການພິມປະວັດສາດລາວທັງຫລາຍ ແລະ ການຄົ້ນຄວ້າໃນເວລານັ້ນ ກໍຍັງບໍ່ລະອຽດກວ້າງຂວາງພຽງພໍ. ມາບັດນີ້ ໄດ້ຄົ້ນຄວ້າຕື່ມອີກ ຈຶ່ງໄດ້ແກ້ໄຂບ່ອນທີ່ເຫັນວ່າຜິດພາດນັ້ນ ໃນລາວບ່ອນດັ່ງນີ້:

**ກ. ບັ້ນທີ 1 ຫລື ບັ້ນຕົ້ນ** ກ່ຽວກັບພູມປະເທດ ຕົ້ນສະບັບທີ່ພິມຄັ້ງທຳອິດຂາດເສັຽ ຈຶ່ງໄດ້ແຕ່ງໃໝ່ ແຕ່ເນື້ອໃນຍັງຄົງຢູ່ຕາມເດີມ.

**ຂ. ບັ້ນທີ 5 ອານາຈັກລ້ານຊ້າງ** ຕອນກ່າວເຖິງການສ້າງທາດສີສອງຮັກ ວ່າສ້າງໃນສມັຍພຣະເຈົ້າສຸຣິຍະວົງສາ ຄ.ສ. 1640 (ຈ.ສ. 1002) ນັ້ນຜິດ ແທ້ຈິງແມ່ນສ້າງໃນສມັຍພຣະເຈົ້າໄຊຍະເຊດຖາທິຣາດ ປີ ຄ.ສ. 1560 (ຈ.ສ. 922) ທີ່ຜິດນັ້ນ ກໍເພາະເວລາຄົ້ນຄວ້າທຳອິດ ເຫັນເລກສັງກາດແຕ່ພຽງເລກ 22 ຈຶ່ງເຂົ້າໃຈວ່າເປັນ ຈ.ສ. 1002 ອັນເປັນສມັຍຂອງ ພຣະເຈົ້າສຸຣິຍະວົງສາ.

**ຄ. ໃນບ່ອນວ່າ** ເຈົ້າຊຸມພູ, ເຈົ້າບຸນຊູ ແລະ ເຈົ້າສຸຣິຍະກຸມມານ ເປັນໂອຣົດຂອງ ເຈົ້າຕອນຄຳນັ້ນ ຄົ້ນພົບໃນໜັງສືອຸຣັງຄະທາດບອກວ່າ ເປັນໂອຣົດຂອງພຣະເຈົ້າວໍຣະວົງສາທັມມະກະຣາດ.

ໃນການຂຽນປະວັດສາດລາວນີ້ ຂ້າພະເຈົ້າໄດ້ຄົ້ນຄວ້າຈາກໜັງສືຕ່າງໆ ຫລາຍສະບັບ ດັ່ງມີບັນຊີແຈ້ງຢູ່ທາງທ້າຍປຶ້ມນີ້ແລ້ວ. ແຕ່ສ່ວນໃຫຍ່ອັນເປັນເນື້ອໃນແທ້ ໄດ້ເອົາຕາມໜັງສືຂຸນບູຣົມອັນເປັນໜັງສືປະວັດສາດຂອງລາວແຕ່ດັ້ງເດີມ ຂຽນເປັນອັກສອນທັມ.

ໜັງສືຕຳນານຂຸນບູຣົມນີ້ ສັງເກດເຫັນວ່າ ໄດ້ແຕ່ງສືບຕໍ່ກັນມາເຖິງ 5 ເທື່ອ ຫລື 5 ສະບັບ ຄື:

1. ສະບັບທີ 1 ຫລື ເທື່ອທີແຣກ ແຕ່ງຂຶ້ນໃນສມັຍ ພຣະເຈົ້າວິຊຸນລະຣາດ ປະມານປີ ພ.ສ. 2046-2047 (ຄ.ສ. 1503-1504). ຜູ້ແຕ່ງແມ່ນ ພຣະມະຫາເທບພະຫລວງ ກັບ ພຣະມຸງຄຸນສິດທິ ໂດຍຄວາມເຫັນຊອບຂອງ ພຣະເຈົ້າແຜ່ນດິນ ດັ່ງມີຂໍ້ຄວາມກ່າວໄວ້ ໃນຕອນທ້າຍຂອງໜັງສືສະບັບນີ້ວ່າ: